ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ ເລກທີ 264 /ລບ
ນະຄອນຫຼວງວຽງຈັນ, ວັນທີ 12 / 05 / 25

# ດຳລັດ
# ວ່າດ້ວຍເຂດສະຫງວນທາງລົດໄຟແຫ່ງຊາດ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍການລົດໄຟ ສະບັບເລກທີ 62/ສພຊ, ລົງວັນທີ 17 ທັນວາ 2018;
- ອີງຕາມ ໜັງສືສະເໜີ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 824/ຍທຂ, ລົງວັນທີ 26 ພະຈິກ 2024.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການ ຄຸ້ມຄອງ, ຕິດຕາມ ກວດກາ ວຽກງານເຂດສະຫງວນທາງລົດໄຟແຫ່ງຊາດ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ມີ ປະສິດທິພາບ, ປະສິດທິຜົນ ແນໃສ່ປົກປັກຮັກສາ ໂຄງລ່າງພື້ນຖານທາງລົດໄຟ, ເຂດສະຫງວນທາງລົດໄຟ ແຫ່ງຊາດ ແລະ ສິ່ງແວດລ້ອມ ພ້ອມທັງຮັບປະກັນຄວາມປອດໄພໃຫ້ແກ່ການແລ່ນລົດໄຟ ມີ ຄວາມສະດວກ, ປອດໄພ ແລະ ວ່ອງໄວ ປະກອບສ່ວນເຂົ້າໃນການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການພັດທະນາ ເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ເຂດສະຫງວນທາງລົດໄຟແຫ່ງຊາດ**

ເຂດສະຫງວນທາງລົດໄຟແຫ່ງຊາດ ແມ່ນ ພື້ນທີ່ທາງລົດໄຟແຫ່ງຊາດ, ພື້ນທີ່ປ້ອງກັນຄວາມປອດໄພ ແລະ ພື້ນທີ່ສະຫງວນທາງລົດໄຟແຫ່ງຊາດ ຢູ່ ໜ້າດິນ, ເທິງໜ້າດິນ, ໃຕ້ດິນ, ເທິງໜ້ານ້ຳ, ອຸໂມງ ລວມທັງ ພື້ນທີ່ສະຫງວນຂອງສະຖານີລົດໄຟ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຫົວລາງລົດໄຟ** ໝາຍເຖິງ ດ້ານເທິງສຸດຂອງລາງລົດໄຟ ທີ່ເປັນບ່ອນລໍ້ລົດໄຟສຳພັດກັບລາງລົດໄຟ;

2. **ຂອບນອກສຸດຂອງຂົວລົດໄຟ** ໝາຍເຖິງ ດ້ານນອກສຸດ ເບື້ອງຊ້າຍ ແລະ ເບື້ອງຂວາ ຂອງໂຄງລ່າງ ຂົວລົດໄຟ;

3. **ເຂດປ້ອງກັນໂຄງລ່າງທາງລົດໄຟ** ໝາຍເຖິງ ພື້ນທີ່ ທີ່ໄດ້ກຳນົດໄວ້ ເພື່ອປ້ອງກັນໂຄງລ່າງ ທາງ, ຂົວ , ອຸໂມງ ທາງລົດໄຟ ໃຫ້ ມີຄວາມປອດໄພ, ມີສະຖຽນລະພາບ, ມີປະສິດທິພາບໃນການແລ່ນລົດໄຟ ແລະ ນຳໃຊ້ຍາວນານ;

**ມາດຕາ 4 ຫຼັກການຄຸ້ມຄອງເຂດສະຫງວນທາງລົດໄຟແຫ່ງຊາດ**

ການຄຸ້ມຄອງເຂດສະຫງວນທາງລົດໄຟແຫ່ງຊາດ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ, ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ຍຸດທະສາດການລົດໄຟ, ແຜນຜັງຕົວເມືອງ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ;

2. ຮັບປະກັນຄວາມປອດໄພໃຫ້ແກ່ການແລ່ນລົດໄຟ, ບໍ່ສົ່ງຜົນກະທົບຕໍ່ ສິດ ແລະ ຜົນປະໂຫຍດຂອງປະຊາຊົນ, ໂຄງລ່າງພື້ນຖານ, ບູຮານສະຖານ, ສິ່ງແວດລ້ອມ ແລະ ມີຄວາມຍືນຍົງ;

3. ມີຄວາມ ໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້;

4. ຮັບປະກັນການມີສ່ວນຮ່ວມຂອງ ປະຊາຊົນ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

**ມາດຕາ 5 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດທີ່ເຄື່ອນໄຫວ ແລະ ພົວພັນກັບ ວຽກງານເຂດສະຫງວນທາງລົດໄຟແຫ່ງຊາດ ໃນຂອບເຂດທົ່ວປະເທດ.

ດຳລັດສະບັບນີ້ ບໍ່ນຳໃຊ້ສຳລັບ ເຂດສະຫງວນ ທາງລົດໄຟໃນຕົວເມືອງ ແລະ ທາງລົດໄຟສະເພາະ.

## ໝວດທີ 2
## ເຂດສະຫງວນທາງລົດໄຟແຫ່ງຊາດ

**ມາດຕາ 6 ເຂດສະຫງວນທາງລົດໄຟແຫ່ງຊາດ**

ເຂດສະຫງວນທາງລົດໄຟແຫ່ງຊາດ ປະກອບມີພື້ນທີ່ ດັ່ງນີ້:

1. ຢູ່ໜ້າດິນ;
2. ຢູ່ເທິງໜ້າດິນ;
3. ຢູ່ໃຕ້ດິນ;
4. ຂົວທາງລົດໄຟຢູ່ເທິງໜ້ານ້ຳ;
5. ອຸໂມງ;
6. ສະຖານີລົດໄຟ.

**ມາດຕາ 7 ພື້ນທີ່ສະຫງວນທາງລົດໄຟແຫ່ງຊາດຢູ່ໜ້າດິນ**

ພື້ນທີ່ສະຫງວນທາງລົດໄຟແຫ່ງຊາດຢູ່ໜ້າດິນ ມີລວງກວ້າງ ດັ່ງນີ້:

1. ເບື້ອງລະ ບໍ່ເກີນ ຫ້າສິບແມັດ ນັບແຕ່ໃຈກາງທາງລົດໄຟອອກໄປ ຢູ່ ເຂດທົ່ງພຽງ, ພູພຽງ ທີ່ມີພື້ນທີ່ພຽງພໍ;

2. ເບື້ອງລະ ບໍ່ຫຼຸດ ຊາວແມັດ ນັບແຕ່ໃຈກາງທາງລົດໄຟອອກໄປ ຢູ່ ເຂດຊຸມຊົນໜາແໜ້ນ ແລະ ເຂດວັດຖຸບູຮານ;

3. ເບື້ອງລະ ບໍ່ຫຼຸດ ເຈັດແມັດ ນັບແຕ່ຂອບນອກສຸດຂອງຂົວລົດໄຟອອກໄປ ຢູ່ ເຂດຊຸມຊົນໜາແໜ້ນ ແລະ ເຂດວັດຖຸບູຮານ.

ສໍາລັບພື້ນທີ່ສະຫງວນທາງລົດໄຟທີ່ຢູ່ໜ້າດິນ ຢູ່ເຂດພູດອຍທີ່ມີພື້ນທີ່ສູງຊັນ ໃຫ້ກໍານົດຕາມເງື່ອນໄຂຕົວຈິງ ຕາມລັກສະນະພູມສັນຖານຂອງແຕ່ລະເຂດ.

**ມາດຕາ 8 ພື້ນທີ່ສະຫງວນທາງລົດໄຟແຫ່ງຊາດຢູ່ເທິງໜ້າດິນ**

**ພື້ນທີ່ສະຫງວນທາງລົດໄຟແຫ່ງຊາດຢູ່ເທິງໜ້າດິນ ມີລວງສູງນັບຈາກຫົວລາງລົດໄຟຕາມລວງຕັ້ງ ດັ່ງນີ້:**

1. ຫ້າແມັດ ສາມສິບຊັງຕີແມັດ ຈາກຫົວລາງລົດໄຟຂຶ້ນໄປ ສໍາລັບທາງລົດໄຟແຫ່ງຊາດ ທີ່ມີຄວາມກວ້າງຂອງລາງ ໜຶ່ງແມັດ;

2. ຫົກແມັດ ເຈັດສິບຫ້າຊັງຕີແມັດ ຈາກຫົວລາງລົດໄຟຂຶ້ນໄປ ສໍາລັບທາງລົດໄຟແຫ່ງຊາດ ທີ່ມີຄວາມກວ້າງຂອງລາງ ໜຶ່ງແມັດ ສີ່ຮ້ອຍສາມສິບຫ້າມິລີແມັດ.

**ພື້ນທີ່ສະຫງວນທາງລົດໄຟແຫ່ງຊາດຢູ່ເທິງໜ້າດິນ ທີ່ຈະກໍ່ສ້າງສາຍສົ່ງໄຟຟ້າຜ່ານແລວທາງລົດໄຟ ຕ້ອງປະຕິບັດ ດັ່ງນີ້:**

1. ສິບເອັດແມັດ ຫ້າສິບຊັງຕີແມັດ ຈາກຫົວລາງລົດໄຟຫາສາຍສົ່ງໄຟຟ້າ ສໍາລັບສາຍສົ່ງໄຟຟ້າທີ່ມີແຮງດັນ ໜຶ່ງຮ້ອຍສິບຫ້າກິໂລໂວນ;

2. ສິບສອງແມັດ ຫ້າສິບຊັງຕີແມັດ ຈາກຫົວລາງລົດໄຟຫາສາຍສົ່ງໄຟຟ້າ ສໍາລັບສາຍສົ່ງໄຟຟ້າທີ່ມີແຮງດັນ ສອງຮ້ອຍສາມສິບກິໂລໂວນ;

3. ສິບຫົກແມັດ ຈາກຫົວລາງລົດໄຟຫາສາຍໄຟຟ້າ ສໍາລັບສາຍສົ່ງໄຟຟ້າທີ່ມີແຮງດັນ ຫ້າຮ້ອຍກິໂລໂວນ;

4. ຊາວເອັດແມັດ ຫ້າສິບຊັງຕີແມັດ ຈາກລະບົບສາຍສົ່ງໄຟຟ້າຂອງລົດໄຟ ສໍາລັບສາຍສົ່ງໄຟຟ້າທີ່ມີແຮງດັນ ເຈັດຮ້ອຍຫ້າສິບກິໂລໂວນ;

5. ຊາວເຈັດແມັດ ຈາກລະບົບສາຍສົ່ງໄຟຟ້າຂອງລົດໄຟ ສໍາລັບສາຍສົ່ງໄຟຟ້າທີ່ມີແຮງດັນ ໜຶ່ງພັນກິໂລໂວນ.

ສໍາລັບສາຍສົ່ງໄຟຟ້າທີ່ມີແຮງດັນ ໜຶ່ງຮ້ອຍສິບຫ້າກິໂລໂວນ ຂຶ້ນໄປ ບໍ່ອະນຸຍາດໃຫ້ຜ່ານເຂດສະຖານີລົດໄຟ.

**ມາດຕາ 9 ພື້ນທີ່ສະຫງວນທາງລົດໄຟແຫ່ງຊາດຢູ່ໃຕ້ດິນ**

ພື້ນທີ່ສະຫງວນທາງລົດໄຟແຫ່ງຊາດຢູ່ໃຕ້ດິນ ນັບຈາກໜ້າດິນເດີມລົງໄປ ມີ ດັ່ງນີ້:

1. ໜຶ່ງແມັດ ຫ້າສິບຊັງຕີແມັດ ສໍາລັບ ທໍ່ນໍ້າປະປາ, ສາຍໂທລະສັບ ແລະ ສາຍໄຟຟ້າ;

2. ສອງແມັດ ສໍາລັບ ທໍ່ສົ່ງອາຍແກັສ ຫຼື ນໍ້າມັນ;

3. ສາມແມັດ ສໍາລັບ ທາງລອດໃຕ້ດິນ.

ທຸກກິດຈະການກໍ່ສ້າງ ທີ່ຢູ່ໃຕ້ດິນຂອງພື້ນທີ່ສະຫງວນທາງລົດໄຟແຫ່ງຊາດ ຕ້ອງມີລະບົບປ້ອງກັນຄວາມປອດໄພສະເພາະຂອງແຕ່ລະກິດຈະການ.

**ມາດຕາ 10 ພື້ນທີ່ສະຫງວນຂົວທາງລົດໄຟແຫ່ງຊາດຢູ່ເທິງໜ້ານ້ຳ**

ພື້ນທີ່ສະຫງວນຂົວທາງລົດໄຟແຫ່ງຊາດຢູ່ເທິງໜ້ານ້ຳ ນັບຈາກ ຂອບນອກສຸດຂອງໂຄງສ້າງຂົວທາງລົດໄຟ ອອກໄປ ດ້ານເໜືອນ້ຳໄຫຼ ແລະ ດ້ານລຸ່ມນ້ຳໄຫຼ ໃຫ້ສະຫງວນນັບຈາກໜ້ານ້ຳ ເລິກລົງໄປເຖິງພື້ນນ້ຳ ຊຶ່ງມີລວງກວ້າງທັງສອງເບື້ອງ ດັ່ງນີ້:

1. ດ້ານເໜືອນ້ຳໄຫຼ ແລະ ດ້ານລຸ່ມນ້ຳໄຫຼ ຂອງຂົວທາງລົດໄຟ ແມ່ນ ເບື້ອງລະ ໜຶ່ງພັນແມັດ ບໍ່ໃຫ້ມີການກໍ່ສ້າງກິດຈະການຕ່າງໆ ເປັນຕົ້ນ ການຖົມດິນໃສ່ແມ່ນ້ຳ, ຕົບແມ່ນ້ຳ, ຕິດຕັ້ງຂົວລອຍ ຫຼື ສິ່ງອຳນວຍຄວາມສະດວກອື່ນທີ່ເປັນອັນຕະລາຍ ແລະ ຄວາມປອດໄພຂອງຂົວທາງລົດໄຟ;

2. ດ້ານເໜືອນ້ຳໄຫຼ ແລະ ດ້ານລຸ່ມນ້ຳໄຫຼ ຂອງຂົວທາງລົດໄຟ ບໍ່ໃຫ້ມີການຂຸດຄົ້ນ ແຮ່ທາດ ຫຼື ບໍ່ວັດສະດຸກໍ່ສ້າງຕ່າງໆ ຊຶ່ງລະອຽດ ມີ ດັ່ງນີ້:

- ຂົວທາງລົດໄຟ ທີ່ມີຄວາມຍາວ ໜ້ອຍກວ່າ ໜຶ່ງຮ້ອຍແມັດ ຢູ່ ດ້ານເໜືອນ້ຳໄຫຼ ແມ່ນ ຫ້າຮ້ອຍແມັດ ແລະ ດ້ານລຸ່ມນ້ຳໄຫຼ ແມ່ນ ໜຶ່ງພັນແມັດ;
- ຂົວທາງລົດໄຟ ທີ່ມີຄວາມຍາວຫຼາຍກວ່າ ໜຶ່ງຮ້ອຍແມັດ ແຕ່ໜ້ອຍກວ່າ ຫ້າຮ້ອຍແມັດ ຢູ່ດ້ານເໜືອນ້ຳໄຫຼ ແມ່ນ ຫ້າຮ້ອຍແມັດ ແລະ ດ້ານລຸ່ມນ້ຳໄຫຼ ແມ່ນ ສອງພັນແມັດ;

ຂົວທາງລົດໄຟ ທີ່ມີຄວາມຍາວຫຼາຍກວ່າ ຫ້າຮ້ອຍແມັດ ຢູ່ ດ້ານເໜືອນ້ຳໄຫຼ ແມ່ນ ຫ້າຮ້ອຍແມັດ ແລະ ດ້ານລຸ່ມນ້ຳໄຫຼ ແມ່ນ ສາມພັນແມັດ.

**ມາດຕາ 11 ພື້ນທີ່ສະຫງວນອຸໂມງທາງລົດໄຟແຫ່ງຊາດ**

ພື້ນທີ່ສະຫງວນອຸໂມງທາງລົດໄຟແຫ່ງຊາດ ມີລວງກວ້າງ ດັ່ງນີ້:

1. ເບື້ອງລະ ໜຶ່ງຮ້ອຍແມັດ ນັບຈາກຂອບນອກສຸດຂອງອຸໂມງ ບໍ່ໃຫ້ມີການ ກໍ່ສ້າງ ແລະ ປູກພືດລົ້ມລຸກ;

2. ເບື້ອງລະ ໜຶ່ງພັນແມັດ ນັບຈາກຂອບນອກສຸດຂອງອຸໂມງ ບໍ່ໃຫ້ມີການ ລະເບີດຫີນ ແລະ ຂຸດຄົ້ນແຮ່ທາດ, ບໍ່ວັດສະດຸກໍ່ສ້າງ.

**ມາດຕາ 12 ພື້ນທີ່ສະຫງວນຂອງສະຖານີລົດໄຟ**

ພື້ນທີ່ສະຫງວນຂອງສະຖານີລົດໄຟ ແມ່ນພື້ນທີ່ສຳລັບ ກໍ່ສ້າງ ຫຼື ຂະຫຍາຍ ສະຖານີລົດໄຟ ຊຶ່ງມີຂອບເຂດ ດັ່ງນີ້:

1. ສະຖານີໃຫຍ່ ມີ ລວງກວ້າງ ສອງຮ້ອຍສີ່ສິບແມັດ ຫາ ຫ້າຮ້ອຍແມັດ ແລະ ລວງຍາວ ສອງພັນແມັດ ຫາ ສາມພັນແມັດ ຕາມຈຸດພິເສດຂອງພື້ນທີ່;

2. ສະຖານີນ້ອຍ ມີ ລວງກວ້າງ ໜຶ່ງຮ້ອຍຫົກສິບແມັດ ຫາ ສອງຮ້ອຍແມັດ ແລະ ລວງຍາວ ໜຶ່ງພັນຫ້າຮ້ອຍແມັດ ຫາ ສອງພັນແມັດ ຕາມຈຸດພິເສດຂອງພື້ນທີ່.

## ໝວດທີ 3
## ການຄຸ້ມຄອງ ແລະ ປົກປັກຮັກສາ ເຂດສະຫງວນທາງລົດໄຟແຫ່ງຊາດ

**ມາດຕາ 13 ການຄຸ້ມຄອງເຂດສະຫງວນທາງລົດໄຟແຫ່ງຊາດ**

ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຄຸ້ມຄອງເຂດສະຫງວນທາງລົດໄຟແຫ່ງຊາດ ໂດຍການປະສານສົມທົບກັບ ກະຊວງ, ອົງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ດ້ວຍການ ສຳຫຼວດ, ຂຶ້ນບັນຊີ ເຂດສະຫງວນ ແລະ ກິດຈະການ ທີ່ຢູ່ໃນເຂດສະຫງວນທາງລົດໄຟແຫ່ງຊາດ.

ໃນກໍລະນີ ມີການກໍ່ສ້າງທີ່ຕິດພັນກັບເຂດສະຫງວນທາງລົດໄຟແຫ່ງຊາດ ເປັນຕົ້ນ ການກໍ່ສ້າງ ແລະ ຕິດຕັ້ງ ຕາຂ່າຍໄຟຟ້າ, ຕາໜ່າງນ້ຳປະປາ, ລະບົບໂທລະຄົມມະນາຄົມ, ທໍ່ສົ່ງນ້ຳມັນ, ທາງລອດ ແລະ ທາງຍົກລະດັບ ຕ້ອງໄດ້ຮັບອະນຸຍາດຈາກ ຂະແໜງການໂຍທາທິການ ແລະ ຂົນສົ່ງ.

ເຂດທາງລົດໄຟຍົກລະດັບ ແລະ ເຂດສະຫງວນທີ່ບໍ່ມີຮົ້ວອ້ອມນັ້ນ ສາມາດປູກພືດລົ້ມລຸກ ເປັນຕົ້ນ ປູກເຂົ້າ, ມັນຕົ້ນ, ສາລີ ແຕ່ໃຫ້ຢູ່ນອກເຂດປ້ອງກັນໂຄງສ້າງທາງລົດໄຟ ແລະ ຕ້ອງໄດ້ຮັບອະນຸຍາດຈາກ ຂະແໜງການໂຍທາທິການ ແລະ ຂົນສົ່ງ.

**ມາດຕາ 14 ການສຳຫຼວດ-ວັດແທກເຂດສະຫງວນທາງລົດໄຟແຫ່ງຊາດ**

ຂະແໜງການໂຍທາທິການ ແລະ ຂົນສົ່ງ ເປັນຜູ້ ສຳຫຼວດ-ວັດແທກ, ເກັບກຳຂໍ້ມູນຂອບເຂດ ເນື້ອທີ່ເຂດສະຫງວນທາງລົດໄຟ ໂດຍປະສານສົມທົບກັບ ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ເພື່ອກຳນົດ ເນື້ອທີ່ເຂດສະຫງວນທາງລົດໄຟແຫ່ງຊາດ ພ້ອມທັງ ປັກຫຼັກໝາຍເຂດດັ່ງກ່າວ.

**ມາດຕາ 15 ການຂຶ້ນບັນຊີເຂດສະຫງວນທາງລົດໄຟແຫ່ງຊາດ**

ຂະແໜງການໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຂຶ້ນບັນຊີທີ່ດິນເຂດສະຫງວນທາງລົດໄຟແຫ່ງຊາດໃນຂອບເຂດທົ່ວປະເທດ ໂດຍປະສານສົມທົບກັບ ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ເພື່ອສ້າງຖານຂໍ້ມູນ ເປັນຕົ້ນ ຊື່ຂອງທາງລົດໄຟ ແລະ ເນື້ອທີ່ເຂດສະຫງວນທາງລົດໄຟແຫ່ງຊາດໃນການ ຄຸ້ມຄອງ ແລະ ນຳໃຊ້ ໃຫ້ມີປະສິດທິຜົນ.

ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ສັງລວມການຂຶ້ນບັນຊີເຂດສະຫງວນທາງລົດໄຟແຫ່ງຊາດ ແລ້ວສົ່ງໃຫ້ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອຂຶ້ນທະບຽນອອກໃບຕາດິນໃຫ້ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຄຸ້ມຄອງ ຕາມກົດໝາຍ.

**ມາດຕາ 16 ການຂໍອະນຸຍາດດຳເນີນກິດຈະການທີ່ຕິດພັນກັບເຂດສະຫງວນທາງລົດໄຟແຫ່ງຊາດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຄວາມຈຳເປັນ ດຳເນີນກິດຈະການໃດໜຶ່ງທີ່ຕິດພັນກັບເຂດສະຫງວນທາງລົດໄຟແຫ່ງຊາດ ເປັນຕົ້ນ ການກໍ່ສ້າງ ແລະ ຕິດຕັ້ງ ຕາຂ່າຍໄຟຟ້າ, ຕາໜ່າງນ້ຳປະປາ, ລະບົບໂທລະຄົມມະນາຄົມ ແລະ ການປູກພືດລົ້ມລຸກ ຕ້ອງໄດ້ຮັບອະນຸຍາດຈາກ ຂະແໜງການໂຍທາທິການ ແລະ ຂົນສົ່ງ.

ສຳລັບ ຂັ້ນຕອນ ການຂໍອະນຸຍາດ, ເອກະສານປະກອບ ແລະ ມາດຕະຖານເຕັກນິກ ທີ່ກ່ຽວຂ້ອງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ໃນກໍລະນີ ການກໍ່ສ້າງທີ່ຕິດພັນກັບເຂດສະຫງວນທາງລົດໄຟແຫ່ງຊາດ ເປັນຕົ້ນ ການ ກໍ່ສ້າງ ແລະ ຕິດຕັ້ງ ຕາຂ່າຍໄຟຟ້າ, ຕາໜ່າງນ້ຳປະປາ, ລະບົບໂທລະຄົມມະນາຄົມ, ທໍ່ສົ່ງນ້ຳມັນ, ທາງລອດ ແລະ ທາງຍົກລະດັບ ຕ້ອງໄດ້ຮັບອະນຸຍາດຈາກ ຂະແໜງການໂຍທາທິການ ແລະ ຂົນສົ່ງ.

ເຂດທາງລົດໄຟຍົກລະດັບ ແລະ ເຂດສະຫງວນທີ່ບໍ່ມີຮົ້ວອ້ອມນັ້ນ ສາມາດປູກພືດລົ້ມລຸກ ເປັນຕົ້ນ ປູກເຂົ້າ, ມັນຕົ້ນ, ສາລີ ແຕ່ໃຫ້ຢູ່ນອກເຂດປ້ອງກັນໂຄງສ້າງທາງລົດໄຟ ແລະ ຕ້ອງໄດ້ຮັບອະນຸຍາດຈາກ ຂະແໜງການໂຍທາທິການ ແລະ ຂົນສົ່ງ.

**ມາດຕາ 17 ສິດ ແລະ ພັນທະ ຂອງຜູ້ດຳເນີນກິດຈະການທີ່ຕິດພັນກັບເຂດສະຫງວນທາງລົດໄຟແຫ່ງຊາດ**

ຜູ້ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນກິດຈະການທີ່ຕິດພັນກັບເຂດສະຫງວນທາງລົດໄຟແຫ່ງຊາດ ມີ ສິດ ແລະ ພັນທະ ດັ່ງນີ້:

1. ດຳເນີນກິດຈະການທີ່ຕິດພັນກັບເຂດສະຫງວນທາງລົດໄຟແຫ່ງຊາດ ທີ່ໄດ້ຮັບອະນຸຍາດ;

2. ໄດ້ຮັບ ການອໍານວຍຄວາມສະດວກ ແລະ ຜົນປະໂຫຍດ ຈາກການດໍາເນີນກິດຈະການ ທີ່ໄດ້ກໍານົດໄວ້ ໃນ ກົດໝາຍ ແລະ ລະບຽບການ;

3. ນໍາໃຊ້ ແລະ ປົກປັກຮັກສາ ພື້ນທີ່ ທີ່ຕິດພັນກັບເຂດສະຫງວນທາງລົດໄຟແຫ່ງຊາດ ຕາມທີ່ໄດ້ຮັບອະນຸຍາດ, ໃນກໍລະນີມີຄວາມເສຍຫາຍ ເປັນຕົ້ນ ການ ຂຸດ, ເຈາະ ກໍຕ້ອງແກ້ໄຂ, ບູລະນະຮັກສາ, ສ້ອມແປງ ແລະ ຟື້ນຟູ ໃຫ້ກັບຄືນສູ່ສະພາບເດີມ;

4. ຮັບຜິດຊອບຕໍ່ຄ່າເສຍຫາຍ ທີ່ຕົນໄດ້ກໍ່ຂຶ້ນ;

5. ອໍານວຍຄວາມສະດວກ, ໃຫ້ການຮ່ວມມື ແລະ ສະໜອງຂໍ້ມູນ ຂ່າວສານ ໃຫ້ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

6. ແຈ້ງ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ໃນກໍລະນີທີ່ພົບເຫັນການ ກໍ່ສ້າງ, ປຸກສ້າງ ຫຼື ດໍາເນີນກິດຈະການໃດໜຶ່ງ ໂດຍບໍ່ໄດ້ຮັບອະນຸຍາດ;

7. ເສຍ ຄ່າທໍານຽມ, ຄ່າບໍລິການ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ;

8. ນໍາໃຊ້ສິດ ແລະ ປະຕິບັດພັນທະ ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 18 ການປົກປັກຮັກສາເຂດສະຫງວນທາງລົດໄຟແຫ່ງຊາດ**

ການປົກປັກຮັກສາເຂດສະຫງວນທາງລົດໄຟແຫ່ງຊາດ ໃຫ້ປະຕິບັດ ດັ່ງນີ້:

1. ຕິດປ້າຍ, ປັກຫຼັກໝາຍ ແລະ/ຫຼື ລ້ອມຮົ້ວ ເພື່ອໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຮັບຮູ້;

2. ກໍານົດພື້ນທີ່ ສໍາລັບການປະຕິບັດໜ້າທີ່ຂອງ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ຢູ່ ສະຖານີລົດໄຟ ແລະ ສະຖານີຫຼີກ.

3. ຈັດສັນພື້ນທີ່ ທີ່ສາມາດອະນຸຍາດ ດໍາເນີນກິດຈະການໃດໜຶ່ງ ເປັນຕົ້ນ ການ ກໍ່ສ້າງ ແລະ ຕິດຕັ້ງ ຕາຂ່າຍໄຟຟ້າ, ຕາໜ່າງນໍ້າປະປາ, ລະບົບໂທລະຄົມມະນາຄົມ ແລະ ການປູກພືດລົ້ມລຸກ;

## ໝວດທີ 4
## ຂໍ້ຫ້າມ

**ມາດຕາ 19 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີ ພຶດຕິກໍາ ດັ່ງນີ້:

1. ດໍາເນີນກິດຈະການ ເປັນຕົ້ນ ການ ກໍ່ສ້າງ, ປຸກສ້າງ, ຕໍ່ເຕີມ ໃນພື້ນທີ່ ທີ່ຕິດພັນກັບເຂດສະຫງວນທາງລົດໄຟແຫ່ງຊາດ ໂດຍບໍ່ໄດ້ຮັບອະນຸຍາດ;

2. ຖິ້ມ, ຕົມ, ກອງ ວັດສະດຸກໍ່ສ້າງ ທີ່ເປັນການກີດຂວາງ ການລະບາຍນໍ້າ ແລະ ທາງໄຫຼຂອງນໍ້າ ໃນເຂດສະຫງວນທາງລົດໄຟແຫ່ງຊາດ;

3. ຂຸດ, ເຈາະ, ກົ່ນ, ຖົມ ດິນ ໃນເຂດສະຫງວນທາງລົດໄຟແຫ່ງຊາດ ຊຶ່ງ ສົ່ງຜົນກະທົບ ແລະ ສ້າງຄວາມເສຍຫາຍ ຕໍ່ໂຄງສ້າງ ທາງ, ຂົວ, ອຸໂມງ ລົດໄຟ;

4. ລະເບີດຫີນ, ຂຸດຄົ້ນ, ສໍາຫຼວດ, ຂຸດຄົ້ນ ແຮ່ທາດ, ວັດສະດຸກໍ່ສ້າງ ໃນເຂດສະຫງວນທາງລົດໄຟແຫ່ງຊາດ;

5. ຖິ້ມ ຂີ້ເຫຍື້ອ, ສິ່ງເສດເຫຼືອ, ເສດວັດສະດຸກໍ່ສ້າງ, ປ່ອຍນໍ້າເປື້ອນ, ຈູດຂີ້ເຫຍື້ອ ໃນເຂດສະຫງວນທາງລົດໄຟແຫ່ງຊາດ;

6. ຈູດປ່າ, ປ່ອຍ ຄວັນ, ມີນລະພິດ, ລ້ຽງສັດ, ທາງລັກຜ່ານ, ມ້າງຮື້ອ ແລະ ປູກຕົ້ນໄມ້ ທີ່ສົ່ງຜົນກະທົບຕໍ່ຄວາມປອດໄພ ຫຼື ກີດຂວາງການແນມະຫັນການສັນຈອນຂອງການແລ່ນລົດໄຟ ໃນເຂດສະຫງວນທາງລົດໄຟແຫ່ງຊາດ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

**ມາດຕາ 20 ຂໍ້ຫ້າມສຳລັບຜູ້ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນກິດຈະການ**

ຫ້າມ ຜູ້ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນກິດຈະການ ມີ ພຶດຕິກຳ ດັ່ງນີ້:

1. ບໍ່ມີລະບົບປ້ອງກັນຄວາມປອດໄພ, ສ້າງຜົນກະທົບຕໍ່ສິ່ງແວດລ້ອມ, ບໍ່ປະຕິບັດຕາມ ແຜນຜັງເຕັກນິກ, ແຜ່ນແຕ້ມເຕັກນິກ, ກຳນົດໝາຍເຕັກນິກ ແລະ ມາດຕະຖານເຕັກນິກ ທີ່ໄດ້ຮັບອະນຸຍາດ;

2. ໃຫ້ ຫຼື ເປັນສື່ກາງໃນການໃຫ້ ສິນບົນ, ສົມຮູ້ຮ່ວມຄິດກັບ ພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ເພື່ອສະແຫວງຫາຜົນປະໂຫຍດສ່ວນຕົວ;

3. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

**ມາດຕາ 21 ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ຫ້າມ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີ ພຶດຕິກຳ ດັ່ງນີ້:

1. ອະນຸຍາດດຳເນີນກິດຈະການ ໃນເຂດສະຫງວນທາງລົດໄຟແຫ່ງຊາດ ໂດຍບໍ່ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;

2. ຮັບ ຫຼື ເປັນສື່ກາງໃນການຮັບ ສິນບົນ, ກົດໜ່ວງ ຖ່ວງດຶງ, ປອມແປງ ຫຼື ນຳໃຊ້ ເອກະສານປອມ;

3. ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດ ສ່ວນຕົວ, ຄອບຄົວ ແລະ ໝູ່ເພື່ອນ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ການຄຸ້ມຄອງ ແລະ ກວດກາ ວຽກງານເຂດສະຫງວນທາງລົດໄຟແຫ່ງຊາດ

**ມາດຕາ 22 ອົງການຄຸ້ມຄອງ ແລະ ກວດກາ ວຽກງານເຂດສະຫງວນທາງລົດໄຟແຫ່ງຊາດ**

ອົງການຄຸ້ມຄອງ ແລະ ກວດກາວຽກງານເຂດສະຫງວນທາງລົດໄຟແຫ່ງຊາດ ປະກອບດ້ວຍ:

1. ກະຊວງໂຍທາທິການ ແລະ ຂົນສົ່ງ;

2. ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ;

3. ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ.

**ມາດຕາ 23 ສິດ ແລະ ໜ້າທີ່ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ**

ໃນການຄຸ້ມຄອງວຽກງານເຂດສະຫງວນທາງລົດໄຟແຫ່ງຊາດ ກະຊວງໂຍທາທິການ ແລະ ຂົນສົ່ງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບ ວຽກງານເຂດສະຫງວນທາງລົດໄຟແຫ່ງຊາດ ເພື່ອສະເໜີຂັ້ນເທິງພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ໃຫ້ເປັນ ແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ ພ້ອມທັງຈັດຕັ້ງປະຕິບັດ;

3. ໂຄສະນາເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບ ວຽກງານເຂດສະຫງວນທາງລົດໄຟແຫ່ງຊາດ;

4. ປູກຈິດສຳນຶກໃຫ້ປະຊາຊົນທີ່ຢູ່ລຽບຕາມແລວທາງລົດໄຟ ປະກອບສ່ວນເຂົ້າໃນ ການຄຸ້ມຄອງ ແລະ ການປົກປັກຮັກສາ ພື້ນທີ່ສະຫງວນທາງລົດໄຟແຫ່ງຊາດ;

5. ສັງລວມ ບັນຊີເຂດສະຫງວນທາງລົດໄຟແຫ່ງຊາດ ໃນຂອບເຂດທົ່ວປະເທດ ແລ້ວສົ່ງໃຫ້ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອອອກໃບຕາດິນໃຫ້ດິນ ເປັນຜູ້ຄຸ້ມຄອງ;

6. ສຳຫຼວດ ແລະ ຂຶ້ນບັນຊີ ກິດຈະການໃນເຂດສະຫງວນທາງລົດໄຟແຫ່ງຊາດ ໃນຂອບເຂດທົ່ວປະເທດ;

7. ອະນຸຍາດໃຫ້ດຳເນີນກິດຈະການທີ່ພົວພັນກັບມາດຕະຖານເຕັກນິກ ໃນເຂດສະຫງວນທາງລົດໄຟແຫ່ງຊາດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

8. ຊີ້ນຳ, ຊຸກຍູ້ ແລະ ຕິດຕາມ ກວດກາ ການຄຸ້ມຄອງເຂດສະຫງວນທາງລົດໄຟແຫ່ງຊາດ;

9. ຂຶ້ນແຜນງົບປະມານເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານເຂດສະຫງວນທາງລົດໄຟແຫ່ງຊາດ;

10. ປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການເຄື່ອນໄຫວວຽກງານເຂດສະຫງວນທາງລົດໄຟແຫ່ງຊາດ;

11. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານເຂດສະຫງວນທາງລົດໄຟແຫ່ງຊາດ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 24 ສິດ ແລະ ໜ້າທີ່ຂອງພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງເຂດສະຫງວນທາງລົດໄຟແຫ່ງຊາດ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ໃຫ້ເປັນ ແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ ພ້ອມທັງຈັດຕັ້ງປະຕິບັດ;

2. ໂຄສະນາເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບ ວຽກງານເຂດສະຫງວນທາງລົດໄຟແຫ່ງຊາດ;

3. ປູກຈິດສຳນຶກໃຫ້ປະຊາຊົນທີ່ຢູ່ລຽບຕາມແລວທາງລົດໄຟ ປະກອບສ່ວນເຂົ້າໃນການຄຸ້ມຄອງ ແລະ ການປົກປັກຮັກສາເຂດສະຫງວນທາງລົດໄຟແຫ່ງຊາດ;

4. ສຳຫຼວດ ແລະ ຂຶ້ນບັນຊີ ກິດຈະການ ໃນເຂດສະຫງວນທາງລົດໄຟແຫ່ງຊາດ;

5. ສັງລວມບັນຊີເຂດສະຫງວນທາງລົດໄຟແຫ່ງຊາດ ໃນຂອບເຂດ ແຂວງ, ນະຄອນຫຼວງ ແລ້ວສົ່ງໃຫ້ ກະຊວງໂຍທາທິການ ແລະ ຂົນສົ່ງ;

6. ອະນຸຍາດໃຫ້ດຳເນີນກິດຈະການທີ່ພົວພັນກັບເຂດສະຫງວນທາງລົດໄຟແຫ່ງຊາດ ໃນຂອບເຂດ ແຂວງ, ນະຄອນຫຼວງ;

7. ຊີ້ນຳ, ຊຸກຍູ້ ແລະ ຕິດຕາມ ກວດກາ ການຄຸ້ມຄອງເຂດສະຫງວນທາງລົດໄຟແຫ່ງຊາດ ໃນຂອບເຂດ ແຂວງ, ນະຄອນຫຼວງ;

8. ຂຶ້ນແຜນງົບປະມານເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານເຂດສະຫງວນທາງລົດໄຟແຫ່ງຊາດ;

9. ປະສານສົມທົບກັບ ພະແນກ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການເຄື່ອນໄຫວວຽກງານເຂດສະຫງວນທາງລົດໄຟແຫ່ງຊາດ;

10. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານເຂດສະຫງວນທາງລົດໄຟແຫ່ງຊາດ ໃຫ້ ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ອົງການປົກຄອງ ແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 25 ສິດ ແລະ ໜ້າທີ່ ຂອງຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງເຂດສະຫງວນທາງລົດໄຟແຫ່ງຊາດ ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ໂຄສະນາເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບ ວຽກງານເຂດສະຫງວນທາງລົດໄຟແຫ່ງຊາດ;

2. ປຸກຈິດສໍານຶກໃຫ້ປະຊາຊົນທີ່ຢູ່ລຽບຕາມແລວທາງລົດໄຟ ປະກອບສ່ວນເຂົ້າໃນ ການຄຸ້ມຄອງ ແລະ ການປົກປັກຮັກສາເຂດສະຫງວນທາງລົດໄຟແຫ່ງຊາດ;

3. ສໍາຫຼວດ ແລະ ຂຶ້ນບັນຊີ ກິດຈະການ ໃນເຂດສະຫງວນທາງລົດໄຟແຫ່ງຊາດ ໃນຂອບເຂດ ເມືອງ, ເທດສະບານ, ນະຄອນ;

4. ສັງລວມບັນຊີເຂດສະຫງວນທາງລົດໄຟແຫ່ງຊາດ ໃນຂອບເຂດ ເມືອງ, ເທດສະບານ, ນະຄອນ ແລ້ວສົ່ງໃຫ້ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ;

5. ເກັບກໍາຂໍ້ມູນກ່ຽວກັບ ການດໍາເນີນກິດຈະການ ທີ່ພົວພັນກັບເຂດສະຫງວນທາງລົດໄຟແຫ່ງຊາດ ໃນຂອບເຂດ ເມືອງ, ເທດສະບານ, ນະຄອນ ແລ້ວລາຍງານໃຫ້ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ;

6. ຊີ້ນໍາ, ຊຸກຍູ້ ແລະ ຕິດຕາມ ກວດກາ ການຄຸ້ມຄອງເຂດສະຫງວນທາງລົດໄຟແຫ່ງຊາດ;

7. ປະສານສົມທົບກັບ ຫ້ອງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການເຄື່ອນໄຫວວຽກງານເຂດສະຫງວນທາງລົດໄຟແຫ່ງຊາດ;

8. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານເຂດສະຫງວນທາງລົດໄຟແຫ່ງຊາດ ໃຫ້ ພະແນກໂຍທາທິການ ແລະ ຂົນສົ່ງ ແລະ ອົງການປົກຄອງ ເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;

9. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ ອື່ນ ຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 26 ສິດ ແລະ ໜ້າທີ່ ຂອງ ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ**

ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ເປັນຕົ້ນ ຂະແໜງການ ປ້ອງກັນປະເທດ, ປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ ໃຫ້ ການຮ່ວມມື ແລະ ປະສານສົມທົບກັບ ອົງການຄຸ້ມຄອງ ແລະ ກວດກາ ວຽກງານເຂດສະຫງວນທາງລົດໄຟແຫ່ງຊາດ ໃນການຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

**ມາດຕາ 27 ເນື້ອໃນການກວດກາ**

ການກວດກາວຽກງານຄຸ້ມຄອງເຂດສະຫງວນທາງລົດໄຟແຫ່ງຊາດ ມີ ເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ ການພັດທະນາວຽກງານການລົດໄຟ, ກົດໝາຍ ແລະ ລະບຽບການ ກ່ຽວກັບ ເຂດສະຫງວນທາງລົດໄຟແຫ່ງຊາດ;

2. ການຈັດຕັ້ງປະຕິບັດ ສິດ ແລະ ໜ້າທີ່ ຂອງ ພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ລົດໄຟ ແລະ ເຈົ້າໜ້າທີ່ອື່ນ ທີ່ກ່ຽວຂ້ອງ;

3. ການເຄື່ອນໄຫວຂອງຜູ້ດໍາເນີນກິດຈະການ;

4. ເນື້ອໃນອື່ນທີ່ເຫັນວ່າ ມີຄວາມຈໍາເປັນ.

**ມາດຕາ 28 ຮູບການການກວດກາ**

ການກວດກາວຽກງານເຂດສະຫງວນທາງລົດໄຟແຫ່ງຊາດ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາແບບຮີບດ່ວນ ໂດຍທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ;

ໃນການດຳເນີນການກວດກາ ຕ້ອງປະຕິບັດຕາມ ກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 29 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ທີ່ເປັນການປະກອບສ່ວນເຂົ້າໃນ ການຄຸ້ມຄອງເຂດສະຫງວນທາງລົດໄຟແຫ່ງຊາດ ຈະໄດ້ຮັບ ການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 30 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ລະເມີດດຳລັດສະບັບນີ້ ຈະຖືກປະຕິບັດມາດຕະການກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກົດໝາຍ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

### ມາດຕາ 31 ການຈັດຕັ້ງປະຕິບັດ

ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີ ປະສິດທິພາບ ແລະ ປະສິດທິຜົນສູງ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

### ມາດຕາ 32 ຜົນສັກສິດ

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 23 ມິຖຸນາ 2025 ເປັນຕົ້ນໄປ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ນາຍົກລັດຖະມົນຕີ

**ສອນໄຊ ສີພັນດອນ**